ກະຊວງອຸດສາຫະກຳ ແລະ ການຄ້າ
Ministry of Industry and Commerce

ປົດຂ່າວ

ຜະລິດຕະພັນໄມ້ລາວເປີດໂອກາດໃໝ່ທາງຕະຫຼາດໃຫ້ແກ່ ອຸດສາຫະກຳປຸງແຕ່ງໄມ້

(ສຳລັບລົງຂ່າວທັນທີ)

ນະຄອນຫຼວງວຽງຈັນ, 31 ພຶດສະພາ 2016: ຂະແໜງການອຸດສາຫະກຳປຸງແຕ່ງໄມ້ລາວຈະສາມາດເພີ່ມການຜະລິດ ແລະ ຜົນກຳໄລ ຈາກການນຳໃຊ້ໄມ້ທີ່ມີໜ້າຕ້າງນ້ອຍ ແລະ ໄມ້ທີ່ບໍ່ເປັນທີ່ນິຍົມໃຊ້ ເພື່ອຜະລິດເປັນຜະລິດຕະພັນສິນຄ້າທີ່ມີມູນຄ່າສູງ. ການສຶກສາຄວາມເປັນໄປໄດ້ເບື້ອງຕົ້ນສຳລັບໂຮງງານຜະລິດໄມ້ແປ້ນຕໍ່ແບບແມ່ນໄດ້ຮັບການຈັດຕັ້ງຂຶ້ນ ໂດຍການສະໜັບສະໜູນຈາກ ໂຄງການ *ສະໜັບສະໜູນແຜນງານ ການຈັດຕັ້ງປະຕິບັດກົດໝາຍປ່າໄມ້, ການຄຸ້ມຄອງ ແລະ ການຄ້າໄມ້* (ProFLEGT), ພາຍໃຕ້ການຮ່ວມມືດ້ານການພັດທະນາຂອງເຢຍລະມັນ, ເຊິ່ງຈັດຕັ້ງປະຕິບັດໂດຍ GIZ (Deutsche Gesellschaft fuer Internationale Zusammenarbeit). ຜົນການສຶກສາຄວາມເປັນໄປໄດ້ເບື້ອງຕົ້ນໃນການຜະລິດ ຫຼື ປຸງແຕ່ງ ຈາກໄມ້ທີ່ມີໜ້າຕ້າງນ້ອຍ ແລະ ໄມ້ທີ່ບໍ່ເປັນນິຍົມໃຊ້ ນີ້ໄດ້ຮັບການເຜີຍແຜ່ ໃນກອງປະຊຸມຄັ້ງອັນທີ 30 ແລະ 31 ພຶດສະພາ 2016, ໂດຍ ກົມອຸດສາຫະກຳ ແລະ ຫັດຖະກຳ, ກະຊວງ ອຸດສາຫະກຳ ແລະ ການຄ້າ, ເຊິ່ງເປັນສ່ວນໜຶ່ງຂອງແຜນຍຸດທະສາດທາງດ້ານເສດຖະກິດຂອງພາກລັດ ເພື່ອຮັບປະກັນການເພີ່ມມູນຄ່າໃຫ້ແກ່ຊັບພະຍາກອນປ່າໄມ້ຂອງປະເທດຊາດ ແລະ ທັງເປັນສ່ວນໜຶ່ງໃນແຜນການເຈລະຈາຂອງລັດຖະບານລາວ ກັບ ສະຫະພາບເອີຣົບ ໃນຂໍ້ຕົກລົງການເຂົ້າເປັນຄູ່ຮ່ວມສັນຍາການຄ້າແບບສະໝັກໃຈ (VPA) ພາຍໃຕ້ ແຜນງານ ການຈັດຕັ້ງປະຕິບັດກົດໝາຍປ່າໄມ້, ການຄຸ້ມຄອງ ແລະ ການຄ້າໄມ້ ລະຫວ່າງ ສປປ ລາວ ແລະ ສະຫະພາບເອີຣົບ (Lao EU-FLEGT process).

ທ່ານ ມະໂນຮັກ ຣາຊະຈັກ, ຫົວໜ້າກົມອຸດສາຫະກຳ ແລະ ຫັດຖະກຳ, ກະຊວງ ອຸດສາຫະກຳ ແລະ ການຄ້າ ກ່າວວ່າ “ຂະແໜງການອຸດສາຫະກຳປຸງແຕ່ງໄມ້ລາວຈະສາມາດແກ້ໄຂບັນຫາ ການຂາດແຄນ ແລະ ການສະໜອງວັດຖຸດິບໄມ້ທີ່ບໍ່ເປັນປົກກະຕິ ໂດຍການນຳໃຊ້ ໄມ້ທີ່ບໍ່ເປັນທີ່ນິຍົມໃຊ້, ໄມ້ທີ່ມີໜ້າຕ້າງຂະໜາດນ້ອຍ, ກິ່ງໄມ້ ແລະ ເສດໄມ້”. ທ່ານ ມະໂນຮັກ ຍັງກ່າວເພີ່ມຕື່ມວ່າ “ການຈັດຕັ້ງປະຕິບັດໃນຮູບແບບນີ້ຍັງສາມາດສ້າງ ແລະ ຮັກສາວຽກເຮັດງານທຳ ໂດຍ ສະເພາະໃນເຂດຫ່າງໄກສອກຫຼີກ, ເພີ່ມຄຸນນະພາບ ແລະ ມູນຄ່າໃຫ້ແກ່ຜະລິດຕະພັນທີ່ເຮັດມາຈາກຊັບພະຍາກອນທີ່ມີມູນຄ່າຕ່ຳພາຍໃນທ້ອງຖິ່ນ, ເພີ່ມການນຳໃຊ້ໄມ້ໃຫ້ມີປະສິດທິພາບ ແລະ ເພີ່ມລາຍຮັບໃຫ້ແກ່ລັດຖະບານຈາກການເກັບພາສີອາກອນ”.

ອີງຕາມຜົນ “ການສຶກສາຄວາມເປັນໄປໄດ້ເບື້ອງຕົ້ນ ໃນການຜະລິດໄມ້ແປ້ນ ແລະ ໄມ້ແປ້ນອັດແໜ້ນ 1-/3 - ຊັ້ນ ທີ່ໃຊ້ ຊະນິດພັນໄມ້ທີ່ບໍ່ນິຍົມໃຊ້, ໄມ້ທ່ອນ ຂະໜາດນ້ອຍ, ງ່າໄມ້ ແລະ ໄມ້ເສດ”, ໂດຍ ບໍລິສັດ Applikatio ປະຈຳ ປະເທດ ເຢຍລະມັນ, ຜະລິດຕະພັນໄມ້ທີ່ໄດ້ຮັບການແນະນຳ ສຳລັບວັດຖຸດິບເຫຼົ່ານີ້ ແມ່ນ ແຜ່ນໄມ້ອັດ ແລະ ໄມ້ແປ້ນຊັ້ນດຽວ ແລະ ໄມ້ແປ້ນສາມຊັ້ນ. ຜະລິດຕະພັນດັ່ງກ່າວເປັນທີ່ນິຍົມໃຊ້ເຂົ້າໃນການຕົບແຕ່ງພາຍໃນ ແລະ ສາມາດນຳໃຊ້ໄມ້ຫຼາຍ ຊະນິດເຂົ້າໃນການຜະລິດສິນຄ້າປະເພດນີ້; ພ້ອມນັ້ນ ຍັງມີຄວາມສະດວກໃນການໃຊ້ເຂົ້າໃນການປຸງແຕ່ງເພີ່ມຕື່ມ ໂດຍ ການນຳໃຊ້ຄວາມຮູ້, ອຸປະກອນ ແລະ ເຄື່ອງຈັກທີ່ມີຢູ່.

ທ່ານ ດຣ. ເດຍເຕີ ຟິງ ກ່າວວ່າ “ຜະລິດຕະພັນໄມ້ທັງສາມປະເພດສະໜອງໂອກາດໃນການເຂົ້າເຖິງຕະຫຼາດພາຍໃນ ແລະ ສາກົນ ເຊັ່ນ ປະເທດອິນເດຍ, ໄທ, ຈີນ, ຕຸລະກີ ແລະ ເອີຣົບ”. ທ່ານ ດຣ. ຟິງ ຍັງກ່າວເພີ່ມຕື່ມວ່າ “ໂອກາດດັ່ງກ່າວນີ້ ຍັງ ຂຶ້ນກັບ ຄຸນສົມບັດສະເພາະ ແລະ ຄວາມນິຍົມຂອງຊະນິດໄມ້ທີ່ໃຊ້, ໂດຍສະເພາະເມື່ອນຳໃຊ້ ໄມ້ທີ່ບໍ່ເປັນທີ່ນິຍົມໃຊ້, ຄຸນ ນະພາບ ແລະ ເວລາໃນການຂົນສົ່ງ, ລາຄາ ແລະ ຄວາມຕ້ອງການຂອງຕະຫຼາດ ແລະ ການຕອບສະໜອງຄວາມຕ້ອງການ ສະເພາະຂອງລູກຄ້າ”.

ທ່ານ ຣາຍໂກ ວໍເນີ, ທີ່ປຶກສາອາວຸໂສຂອງໂຄງການ *ການສະໜັບສະໜຸນແຜນງານການຈັດຕັ້ງປະຕິບັດກົດໝາຍປ່າໄມ້, ການຄຸ້ມຄອງ ແລະ ການຄ້າໄມ້ ລະຫວ່າງ ສປປ ລາວ ກັບ ສະຫະພາບເອີຣົບ* (ProFLEGT) ໄດ້ກ່າວວ່າ “ໃນການປຸງ ແຕ່ງຊັບພະຍາກອນທີ່ບໍ່ຖືກນຳໃຊ້ໃຫ້ກາຍເປັນຜະລິດຕະພັນທີ່ມີມູນຄ່າເພີ່ມ, ໂຮງງານຜະລິດສາມາດເປັນແບບຢ່າງໃຫ້ແກ່ ຜູ້ປະກອບການ ແລະ ນັກລົງທຶນອື່ນໆ ທາງດ້ານ ລະບົບການຄວບຄຸມຕ່ອງໂສ້ການສະໜອງໄມ້ (CoC), ເຕັກໂນໂລຍີ ການຜະລິດທີ່ທັນສະໄໝ, ມີປະສິດທິພາບ ແລະ ເປັນມິດຕໍ່ສິ່ງແວດລ້ອມ, ລະບົບການຄຸ້ມຄອງການຜະລິດ ທີ່ເຊື່ອມໂຍງ ກັບ ລະບົບການຄວບຄຸມຕ່ອງໂສ້ການສະໜອງໄມ້, ແລະ ລະບົບການຮັກສາອຸປະກອນ ແລະ ເຄື່ອງຈັກປ້ອງກັນຕ່າງໆ”. ພ້ອມນັ້ນ ທ່ານ ຣາຍໂກ ຍັງໄດ້ກ່າວເພີ່ມຕື່ມວ່າ “ເຖິງຢ່າງໃດກໍຕາມ, ເພື່ອບັນລຸໄດ້ເປົ້າໝາຍດັ່ງກ່າວນີ້, ມັນຮຽກຮ້ອງໃຫ້ມີ ການສ້າງຄວາມອາດສາມາດໃຫ້ແກ່ພະນັກງານໃນຫົວຂໍ້ຕ່າງໆທີ່ຫຼາກຫຼາຍ ຢ່າງຮີບດ່ວນ ເຊັ່ນວ່າ ການຄຸ້ມຄອງການຜະລິດ ແລະ ລະບົບການຄວບຄຸມຕ່ອງໂສ້ການສະໜອງໄມ້, ການຕິດຕາມການປະຕິບັດງານ ແລະ ຄ່າໃຊ້ຈ່າຍຕ່າງໆໃນໂຮງງານ ຜະລິດ, ແລະ ການຄຸ້ມຄອງຄຸນນະພາບ ແລະ ຄວາມຮູ້ພື້ນຖານທາງດ້ານເຕັກໂນໂລຍີໄມ້ ແລະ ວິທະຍາສາດວັດສະດຸ”.

ໃນທີ່ປະຊຸມ, ຜູ້ເຂົ້າຮ່ວມຍັງໄດ້ມີໂອກາດສົນທະນາ ແລະ ເຫັນດີ ຕໍ່ກັບບາດກ້າວໃນການພັດທະນາ ແລະ ການຈັດຕັ້ງ ປະຕິບັດ ແນວທາງດັ່ງກ່າວ, ພ້ອມທັງ ລະບຸ ແລະ ເຫັນດີໃນການຮັບຮອງເອົາບໍລິສັດເອກະຊົນເຂົ້າຮ່ວມໃນການຈັດຕັ້ງ ປະຕິບັດໂຄງການທົດລອງດັ່ງກ່າວ.

ສະຫະພາບເອີຣົບ (EU) ໄດ້ລິເລີ່ມແຜນງານການຈັດຕັ້ງປະຕິບັດກົດໝາຍປ່າໄມ້, ການຄຸ້ມຄອງ ແລະ ການຄ້າໄມ້ (FLEGT) ເພື່ອສະກັດກັ້ນການຂຸດຄົ້ນໄມ້ທີ່ຜິດກົດໝາຍໃນທົ່ວໂລກ, ພ້ອມນັ້ນ EU ຍັງໄດ້ກະກຽມການເຈລະຈາຂໍ້ ຕົກລົງການເຂົ້າເປັນຄູ່ຮ່ວມສັນຍາການຄ້າໄມ້ແບບສະໝັກໃຈ (VPA) ກັບບັນດາປະເທດຜະລິດໄມ້, ເຊິ່ງໄດ້ວາງເຈດຈຳນົງ

ກະຊວງອຸດສາຫະກຳ ແລະ ການຄ້າ
Ministry of Industry and Commerce

ແລະ ແນວທາງໃນການຫຼຸດຜ່ອນການຄ້າໄມ້ທີ່ຜິດກົດໝາຍ, ພ້ອມກັບລະບົບການອອກອະນຸຍາດເພື່ອຢັ້ງຢືນຄວາມຖືກຕ້ອງຂອງໄມ້ທີ່ຈະສົ່ງອອກໄປຕະຫຼາດເອີຣົບ. ນິຍາມທີ່ຖືກກົດໝາຍຂອງໄມ້ເປັນອົງປະກອບໜຶ່ງທີ່ສຳຄັນໃນລະບົບການຮັບປະກັນຄວາມຖືກຕ້ອງທາງດ້ານກົດໝາຍຂອງໄມ້, ເຊິ່ງເປັນສ່ວນໜຶ່ງຂອງຂໍ້ຕົກລົງການເຂົ້າເປັນຄູ່ຮ່ວມສັນຍາການຄ້າໄມ້ແບບສະໝັກໃຈ (VPA).

ສປປ ລາວ ແມ່ນໜຶ່ງໃນບັນດາປະເທດທີ່ເລີ່ມເຈລະຈາຂໍ້ຕົກລົງການເປັນຄູ່ຮ່ວມສັນຍາການຄ້າແບບສະໝັກໃຈ (VPA), ເຊິ່ງເປັນຂໍ້ຕົກລົງການຄ້າກັບສະຫະພາບເອີຣົບ, ທີ່ໄດ້ຮັບການຊ່ວຍເຫຼືອຈາກໂຄງການ GIZ ແຫ່ງປະເທດເຢຍລະມັນ ຕໍ່ການສະໜັບສະໜຸນແຜນງານການຈັດຕັ້ງປະຕິບັດກົດໝາຍປ່າໄມ້, ການຄຸ້ມຄອງ ແລະ ການຄ້າໄມ້ ລະຫວ່າງ ສປປ ລາວ ກັບ ສະຫະພາບເອີຣົບ (ProFLEGT).

ProFLEGT ແມ່ນໂຄງການລິເລີ່ມຮ່ວມຂອງລັດຖະບານແຫ່ງ ສປປ ລາວ ແລະ ການຮ່ວມມືການພັດທະນາຂອງປະເທດເຢຍລະມັນ, ເຊິ່ງເປັນໂຄງການທີ່ເຮັດວຽກຮ່ວມກັບ ກະຊວງ ກະສິກຳ ແລະ ປ່າໄມ້ (ໂດຍຜ່ານ ຫ້ອງການປະສານງານ FLEGT ພາຍໃຕ້ການຄຸ້ມຄອງຂອງ ກົມກວດກາປ່າໄມ້, DOFI), ກະຊວງ ອຸດສາຫະກຳ ແລະ ການຄ້າ, ແລະ ກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ລວມທັງ ໜ່ວຍງານພາກລັດ, ອົງການຈັດຕັ້ງທາງສັງຄົມ, ສະຖາບັນການສຶກສາ ແລະ ອຸດສາຫະກຳປຸງແຕ່ງໄມ້.

ໃນປະເທດລາວ, ອົງການ WWF ຈັດຕັ້ງປະຕິບັດແຜນງານ FLEGT ຮ່ວມກັບ ກົມກວດກາປ່າໄມ້ ໃນ ສອງ ແຂວງ ພາກໃຕ້ (ແຂວງ ຄຳມ່ວນ ແລະ ແຂວງ ອັດຕະປື). ອົງການ WWF ໄດ້ຈັດຕັ້ງປະຕິບັດວຽກງານໂດຍການຊອກຫາແນວທາງແກ້ໄຂ, ການມີສ່ວນຮ່ວມຂອງຫຼາຍພາກສ່ວນ ນຳໃຊ້ຮູບແບບທີ່ເໝາະສົມຂອງທ້ອງຖິ່ນ ແລະ ສາກົນ ທີ່ມີການຮ່ວມມືກັນຂອງພາກສ່ວນທີ່ກ່ຽວຂ້ອງ ເພື່ອຫຼຸດຜ່ອນການຕັດໄມ້ທຳລາຍປ່າ ແລະ ການເຊື່ອມໂຊມຂອງປ່າໄມ້.

ກະຊວງອຸດສາຫະກຳ ແລະ ການຄ້າ
Ministry of Industry and Commerce

ຂໍ້ມູນເພີ່ມເຕີມສຳລັບບັນນາທິການ

ໃນປີ 2003, ສະຫະພາບເອີຣົບ (EU) ໄດ້ຈັດພິມແຜນວຽກການຈັດຕັ້ງປະຕິບັດກົດໝາຍປ່າໄມ້, ການຄຸ້ມຄອງ ແລະ ການຄ້າໄມ້ (FLEGT) ເພື່ອຕໍ່ສູ້ຕ້ານການຕັດໄມ້ຜິດກົດໝາຍໃນບັນດາປະເທດທີ່ນຳເຂົ້າໄມ້. ອົງປະກອບທີ່ສຳຄັນຂອງແຜນວຽກ FLEGT ແມ່ນລະບົບການເຂົ້າຮ່ວມແບບສະໝັກໃຈ ເພື່ອຮັບປະກັນວ່າ ມີພຽງແຕ່ໄມ້ທີ່ຖືກກົດໝາຍເທົ່ານັ້ນ ທີ່ຖືກນຳເຂົ້າຕະຫລາດ EU ຈາກປະເທດທີ່ເຫັນດີທີ່ເຂົ້າຮ່ວມໃນລະບົບນີ້. ໂຄງຮ່າງກົດໝາຍພາຍໃນຂອງ EU ສຳລັບລະບົບນີ້ແມ່ນ ລະບຽບກົດໝາຍທີ່ຖືກຮັບຮອງໃນເດືອນ ທັນວາ 2005, ແລະ ລະບຽບກົດໝາຍນຳໃຊ້ປະຕິບັດໃນປີ 2008, ເຊິ່ງສາມາດຄວບຄຸມການນຳເຂົ້າຂອງໄມ້ສູ່ຕະຫຼາດ EU ຈາກປະເທດທີ່ເຂົ້າຮ່ວມການເຈລະຈາຂໍ້ຕົກລົງການເຂົ້າເປັນຄູ່ຮ່ວມສັນຍາການຄ້າແບບສະໝັກໃຈ (FLEGT VPAs) ກັບ EU.

ອົງປະກອບອັນຕົ້ນຕໍ ຂອງ FLEGT VPA ແມ່ນ ການພັດທະນາ ແລະ ການຈັດຕັ້ງປະຕິບັດຂອງລະບົບການຮັບປະກັນຄວາມຖືກຕ້ອງທາງກົດໝາຍຂອງໄມ້ (TLAS) ເຊິ່ງປະກອບມີ ນິຍາມໄມ້ທີ່ຖືກຕ້ອງຕາມກົດໝາຍແຫ່ງຊາດ, ລະບົບການຄຸ້ມຄອງຕ່ອງໂສ້ການສະໜອງ, ຂັ້ນຕອນການພິສູດໄມ້ທີ່ຖືກຕ້ອງຕາມກົດໝາຍ ແລະ ຕ່ອງໂສ້ການສະໜອງ, ລະບົບການອອກອະນຸຍາດ FLEGT; ແລະ ການກວດສອບລະບົບທັງໝົດແບບອິດສະຫຼະ.

ໃນກໍລະນີທີ່ເຫັນດີຕົກລົງ, VPAs ຈະລວມເອົາຄວາມຮັບຜິດຊອບ ແລະ ແຜນວຽກຈາກທັງສອງຝ່າຍໃນການຢຸດຢັ້ງການຄ້າໄມ້ທີ່ຜິດກົດໝາຍ, ພ້ອມກັບ ລະບົບການອອກອະນຸຍາດເພື່ອພິສູດຄວາມຖືກຕ້ອງຕາມກົດໝາຍຂອງໄມ້ທີ່ສົ່ງອອກໄປ EU. ຂໍ້ຕົກລົງຍັງ ສົ່ງເສີມການບັງຄັບໃຊ້ກົດໝາຍໄມ້ທີ່ດີຂຶ້ນກວ່າເກົ່າ ແລະ ສົ່ງເສີມວິທີການມີສ່ວນຮ່ວມຂອງປະຊາສັງຄົມ ແລະ ພາກເອກະຊົນ.

ຂໍ້ມູນເພີ່ມເຕີມກ່ຽວກັບ ແຜນງານ ການຈັດຕັ້ງປະຕິບັດກົດໝາຍປ່າໄມ້, ການຄຸ້ມຄອງ ແລະ ການຄ້າໄມ້ ລະຫວ່າງ ສປປ ລາວ ແລະ ສະຫະພາບເອີຣົບ: *http://flegtlaos.com/*

ຂໍ້ມູນເພີ່ມເຕີມກ່ຽວກັບ ແຜນວຽກ EU-FLEGT: *http://www.flegt.org/*

ຂໍ້ມູນເພີ່ມເຕີມກ່ຽວກັບ ສະເພາະນັກຂ່າວ ໃນການລາຍງານຜົນການສະກັດກັ້ນການຕັດໄມ້ທີ່ຜິດກົດໝາຍ ໂດຍຜ່ານ ແຜນວຽກ EU-FLEGT: *http://www.flegtmedia.org/*

ຂໍ້ມູນເພີ່ມເຕີມກ່ຽວກັບ ນະໂຍບາຍປ່າໄມ້ອາຊຽນສາມາດເຂົ້າເບິ່ງໄດ້ທີ່:
http://www.asean.org/

ຂໍ້ມູນເພີ່ມເຕີມກ່ຽວກັບ ແນວຄວາມຄິດລິເລີ່ມ ກ່ຽວກັບ ການຈັດຕັ້ງປະຕິບັດກົດໝາຍປ່າໄມ້, ການຄຸ້ມຄອງ ແລະ ການຄ້າໄມ້ ສາມາດເຂົ້າເບິ່ງໄດ້ທີ່:

ກະຊວງອຸດສາຫະກຳ ແລະ ການຄ້າ
Ministry of Industry and Commerce

http://ec.europa.eu/development/policies/9interventionareas/environment/forest/forestry_intro_en.cfm

www.euflegt.efi.int

ຂໍ້ມູນເພີ່ມເຕີມກ່ຽວກັບ ຄວາມເຂົ້າໃຈຕໍ່ກັບ ການເຄື່ອນຍ້າຍ ແລະ ການຄວບຄຸມໄມ້ ໃນ ສ.ປ.ປ. ລາວ ສາມາດເຂົ້າເບິ່ງໄດ້ທີ່:

http://www.euflegt.efi.int/publications/-/document/25520

ຂໍ້ມູນເພີ່ມເຕີມກ່ຽວກັບ ກົດລະບຽບການນຳເຂົ້າໄມ້ເຂົ້າສູ່ສະຫະພາບເອີຣົບ

http://www.cbi.eu/market-information/timber-products/eutr-guide

***ຂໍ້ມູນເພີ່ມເຕີມກ່ຽວກັບ FLEGT*, ເຊີນຕິດຕໍ່:**

ທ່ານ ແກ້ວພູວົງ ຈັນທະປັນຍາ, FLEGT Standing Office, ມືຖື: 00856 20 98 07 77 17,
ckeophouvong@yahoo.com